# ແຈ້ງການແນະນຳ

## ເຖິງບັນດານັກຮຽນ-ນັກສຶກສາ ແລະ ພົນລະເມືອງລາວ ຢູ່ ອົດສະຕຣາລີ ແລະ ນິວຊີແລນ

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ທີ່ ແຄນເບີຣາ ຂໍແຈ້ງມາຍັງບັນດາທ່ານ ຊາບວ່າ ປັດຈຸບັນສະພາບການແຜ່ລະບາດຂອງພະຍາດຈຸລາໂລກອັກເສບປອດ (COVID-19) ໄດ້ແຜ່ລາມໄປເກືອບທຸກໆ ປະເທດ ແລະ ເຂດແຄ້ວນໃນໂລກ ຊຶ່ງຕົວເລກຜູ້ຕິດເຊື້ອທົ່ວໂລກ ມາຮອດວັນທີ 3 ເມສາ 2020 ມີ 1,015,964 ກໍລະນີ, ເສຍຊີວິດ: 53,219 ກໍລະນີ, ປົວດີ: 212,995 ກໍລະນີ.

ໃນທ່າມກາງສະພາບການແຜ່ລະບາດນີ້, ຫລາຍປະເທດ ໄດ້ອອກມາດຕະການຫລາຍຢ່າງ ລວມທັງການ ປິດຊາຍແດນ ເພື່ອແນ່ໃສ່ລະງັບການແຜ່ລະບາດ ໃຫ້ໄວເທົ່າທີ່ຈະໄວໄດ້. ອີງຕາມຂໍ້ມູນອົງການອານາໄມໂລກ (WHO) ແລະ ຫລາຍໆ ປະເທດ ທີ່ໄດ້ຮັບຜົນກະທົບ ໄດ້ເຜີຍແຜ່ວ່າ ພະຍາດ COVID-19 ເປັນເຊື້ອພະຍາດ ແຜ່ລະບາດໄວ ແລະ ຮ້າຍແຮງ, ຜູ້ຕິດເຊື້ອພະຍາດໄລຍະຕົ້ນຈະບໍ່ຮູ້ວ່າຕົນເອງຕິດພະຍາດເທື່ອ ຈຶ່ງໄປມາແບບຄົນ ທົ່ວໆໄປ ຊຶ່ງເຮັດໃຫ້ພະຍາດໄດ້ຕິດຕໍ່ອອກໄປສູ່ຄົນອ້ອມຂ້າງ ແລະ ຜູ້ຄົນເຫລົ່ານັ້ນ ກໍໄປຕິດໃສ່ຄົນອື່ນແບບທະວີ ຄູນ ເພິ່ນຈຶ່ງຮຽກຮ້ອງໃຫ້ຢູ່ ໃນເຮືອນເປັນຫລັກ.

ສະຖານທູດ ເຂົ້າໃຈສະພາບຄວາມຫຍຸ້ງຍາກ ທີ່ບັນດານັກຮຽນນັກສຶກສາ ແລະ ພົນລະເມືອງລາວ ພວມ ປະເຊີນໃນປັດຈຸບັນ ອັນເນື່ອງມາຈາກຜົນກະທົບຂອງ ພະຍາດລະບາດ COVID-19 ແລະ ສະຖານທູດ ກໍມີ ຄວາມເປັນຫ່ວງ. ອີງໃສ່ສະພາບໃນປັດຈຸບັນ ເຫັນວ່າ ບັນຫານີ້ ອາດຍັງຈະແກ່ຍາວໄປອີກ ແລະ ອີງຕາມມາດຕະ ການສະກັດກັ້ນ, ປ້ອງກັນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ COVID-19 ຂອງ ສປປ ລາວ ກໍຄື ມະຕິວ່າ ດ້ວຍການຮັບມືການລະບາດຂອງ COVID-19 ສະບັບເລກທີ 03/ລບ, ລົງວັນທີ 23.03.2020, ຄຳສັ່ງວ່າດ້ວຍ ການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກະກຽມຄວາມພ້ອມຮອບດ້ານເພື່ອ ຕ້ານພະຍາດໂຄວິດ19 ສະລັບເລກທີ: 06/ນຍ, ລົງວັນທີ 29 ມີນາ 2020 ແລະ ແຈ້ງການຕ່າງໆ ຂອງ ກະຊວງ ການຕ່າງປະເທດ, ແລະ ຂອງ ອົດສະຕຣາລີ ແລະ ນິວຊີແລນ, ສະຖານທູດຂໍສະເໜີແນະນຳບາງຢ່າງ ດັ່ງນີ້:

1. ຂໍໃຫ້ ບັນດານັກຮຽນ-ນັກສຶກສາ ແລະ ພົນລະເມືອງລາວ ທີ່ກຳລັງອາໄສຢູ່ອົດສະຕຣາລລີ ແລະ ນິວຊີແລນ ຫລີກລຽງການເດີນທາງທຸກປະເພດ ລວມທັງການເດີນທາງກັບ ສປປ ລາວ, ຍົກເວັ້ນແຕ່ກໍລະນີທີ່ມີຄວາມຈຳ ເປັນ ແລະ ສຸກເສີນທີ່ສຸດ, ຊຶ່ງ ຈະຕ້ອງໄດ້ໃຫ້ການຮ່ວມມືໃນການປະຕິບັດຕາມມາດຕະການກວດກາຕ່າງໆຢ່າງ ເຂັ້ມງວດ. ສາມາດເບິ່ງຂໍ້ມູນ ໄດ້ທີ່: https://www.covid19.gov.la (ເວັບໄຊ້ ຂອງຄະນະສະເພາະກິດ).
2. ຂໍໃຫ້ ບັນດານັກຮຽນ-ນັກສຶກສາ ແລະ ພົນລະເມືອງລາວ ປະຕິບັດຕາມບັນດາມາດຕະການ ກໍຄືລະບຽບກົດ ຫມາຍທີ່ ອົດສະຕຣາລີ ແລະ ນິວຊີແລນ ວາງອອກຢ່າງເຂັ້ມງວດ, ຊຶ່ງສາມາດເບິ່ງຂໍ້ມູນ ໄດ້ທີ່: www.australia.gov.au (ສໍາລັບ ອົດສະຕຣາລີ) ແລະ http://health.govt.nz (ສໍາລັບ ນິວຊີແລນ).
3. ຂໍໃຫ້ ບັນດານັກຮຽນ-ນັກສຶກສາ ແລະ ພົນລະເມືອງລາວ ທຸກໆຄົນເຄົາລົບລະບຽບກົດໝາຍຂອງທ້ອງຖິ່ນ ບ່ອນທີ່ຕົນອາໄສຢູ່ຢ່າງເຂັ້ມງວດ ແລະ ຂໍໃຫ້ສ້າງລະບຽບ ແລະ ວາງວິໄນຕົນເອງໃຫ້ເຂັ້ມງວດ, ບໍ່ປະຫມາດ, ບໍ່ ອອກໄປທາງນອກໂດຍບໍ່ຈຳເປັນ, ຫມັ່ນອອກກຳລັງກາຍເທົ່າທີ່ເຮັດໄດ້ ແລະ ອື່ນໆ.

4. ເລື່ອງຂໍຕໍ່ວິຊາ ສາມາດເບິ່ງລາຍລະອຽດ ແລະ ຍື່ນຄຳຮ້ອງດ້ວຍຕົນເອງໄດ້ທີ່: https://covid19.homeaffairs.gov.au(ສາລັບ ອົດສະຕຣາລີ) ແລະ https://www.immigration.govt.nz/about-us/covid-19/visa-conditions-epidemic-statusvisa-conditions-epidemic-status (ສາລັບ ນິວຊີແລນ)

5. ຂໍໃຫ້ບັນດານັກຮຽນ-ນັກສຶກສາ ປະຕິບັດຕາມລະບຽບຂອງໂຮງຮຽນທີ່ຕົນພວມຮຽນຢູ່. ເລື້ອງການຮຽນ, ຂໍໃຫ້ຕິດຕໍ່ກັບໂຮງຮຽນ ແລະ ຖ້າໂຮງຮຽນ ບໍ່ສາມາດຊ່ວຍໄດ້ ກໍໃຫ້ ປະສານກັບ ກະຊວງສຶກສາທິການ ຂອງ ອົດສະຕຣາລີ (the Department of Education, Skills and Employment at (+61) 1300 981 621 from 9am to 5pm, Monday to Friday AEDT, except public holidays or email international.students@dese.gov.au )
6. ສາມາດສອບຖາມ ຫລື ປະສານກ່ຽວກັບການກວດພະຍາດ COVID-19 ໄດ້ທີ່:
   https://www.health.gov.au/news/health-alerts/novel-coronavirus-2019-ncov-health-alert#if-youre-concerned (ສາລັບ ອົດສະຕຣາລີ)
   https://www.health.govt.nz/our-work/diseases-and-conditions/covid-19-novel-coronavirus (ສໍາລັບ ນິວຊີແລນ).

ສະຖານທູດ ມີຄວາມຍິນດີ ທີ່ຈະໃຫ້ການຮ່ວມມື ຊ່ວຍເຫລືອ ແລະ ໃຫ້ຄໍາປຶກສາ ຊຶ່ງສາມາດເຂົ້າເບິ່ງ ຂໍ້ມູນໄດ້ທີ່ ເວັບໄຊ້ ຂອງສະຖານທູດ http://www.laosembassy.net, ໂທສອບຖາມໄດ້ ໃນໂມງລັດຖະການ ເບີ: 02 6286 4595 ຫລື 02 6286 6933 ຫລື ສົ່ງຜ່ານ ອີແມວ: laoemb@bigpond.net.au

ສໍາລັບການຕິດຕໍ່ພົວພັນກັບຄະນະນັກສຶກສາລາວໃນແຕ່ລະລັດເທົ່າທີ່ສະຖານທູດມີຂໍ້ມູນດັ່ງລຸ່ມນີ້ :

| | | |
|---|---|---|
| Australia: | 1. Canberra: | - ທ່ານ ນາງ ອາພະພອນ. ເບີໂທ: +61 423 585 636 |
| | 2. NSW: | - ທ່ານ ທັດສະພອນ. ເບີໂທ: +61 451 323 556 |
| | 3. VIC: | - ທ່ານ ໄຊເສດຖາ. ເບີໂທ: +61 402 542 833 |
| | 4. QLD: | - ທ່ານ ນາງ ສູ່ວັນໄຊ. ເບີໂທ: +61 433 723 839 |
| | 5. SA: | - ທ່ານ ນາງ ເຄືອວັນ. ເບີໂທ: +61 424 383 636 |
| New Zealand: | 1. Auckland: | - ທ່ານ ກ່ອງແກ້ວ. ເບີໂທ: +64 290 201 5518 |
| | 2. Wellington: | - ທ່ານ ສຸກຕິສັກ. ເບີໂທ: +64 22 103 4101 |

ດັ່ງນັ້ນ, ຈຶ່ງຂໍການຮ່ວມມືນໍາທຸກໆທ່ານ ມານະໂອກາດນີ້ດ້ວຍ.

ແຄນເບີຣາ, ວັນທີ 3 ເມສາ 2020

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ